Washington State Department of Social & Health Services
Transforming lives
DSHS 22-822 LA (Rev. 9/17) Laotian

# ແຜນທີ່ຫົນທາງນໍາພາໄປສູ່ການບໍລິການ ແລະ ການອູ້ມຊູ

## ສໍາລັບເດັກນ້ອຍ ແລະ ຄອບຄົວ





Washington State
Department of Social & Health Services
Transforming lives

**Developmental Disabilities Administration**

## ຄວາມມຸ່ງຫມາຍຂອງພວກເຮົາຕໍ່ທ່ານ

ກົມ Department of Social and Health Services' (DSHS) Developmental Disabilities Administration (DDA) ໄດ້ມຸ່ງຫມາຍຕໍ່ການເຮັດໃຫ້ແນ່ໃຈວ່າສິດທິຂອງທ່ານໄດ້ຖືກ ປົກປ້ອງໄວ້.

ໃນຖານະເປັນລູກຄ້າຂອງ DDA , ທ່ານຕ້ອງມີຜູ້ຕາງຫນ້າຜູ້ທີ່ສາມາດເວົ້າລົມນໍາທ່ານກ່ຽວກັບຄວາມຫມາຍຂອງການປ່ຽນແປງຕ່າງໆໃນການບໍລິການ ຫລື ການອູ້ມຊູຂອງທ່ານ, ລວມທັງສິດທິໃນການອຸທອນຂອງທ່ານ. ຖ້າຫາກວ່າທ່ານບໍ່ມີຜູ້ຕາງຫນ້າຄົນນຶ່ງ, ກົມ DSHS ຈະຊ່ວຍເຫລືອທ່ານຊອກເອົາຄົນນຶ່ງ.

ກົມ DSHS ຈະສົ່ງໄປໃຫ້ທ່ານ ແລະ ຜູ້ຕາງຫນ້າຂອງທ່ານ ໃບແຈ້ງການກະທໍາທີ່ຖືກວາງອອກມາ (PANs) ທຸກໆເທື່ອທີ່ມີການປ່ຽນແປງຢູ່ໃນການບໍລິການ ຫລື ເງື່ອນໄຂຮັບເອົາຂອງທ່ານ. ໃບແຈ້ງການຈະບອກໃຫ້ທ່ານຊາບວ່າແມ່ນຫຍັງເກີດຂຶ້ນ, ຈະຂໍອຸທອນໄດ້ຢ່າງໃດຖ້າຫາກວ່າທ່ານບໍ່ເຫັນພ້ອມນໍາ, ແລະ ຂອບເຂດເວລາສໍາລັບການຂໍອຸທອນຄໍາຕັດສິນ.

ສິດທິໃນການຟັງເຣື່ອງຈາກອໍານາດການປົກຄອງຈະອະນຸຍາດໃຫ້ທ່ານທີ່ຈະຂໍອຸທອນຄໍາຕັດສິນກ່ຽວກັບການປ່ຽນແປງໃນການບໍລິການ ຫລື ເງື່ອນໄຂຮັບເອົາການບໍລິການ. ຣາຍຣະອຽດກ່ຽວກັບສິດທິໃນການຟັງເຣື່ອງຈາກອໍານາດການປົກຄອງຈະຖືກພົບເຫັນຢູ່ໃນ PAN ຂອງທ່ານ.

ເງື່ອນໄຂຮັບເອົາການບໍລິການໄດ້ຖືກພິຈາຣະນາເບິ່ງໂດຍການຕີຣາຄາປະເມີນຜົນທີ່ຖືກເຮັດໂດຍຜູ້ຈັດການຊ່ວຍເຫລືອເອກສານຂອງທ່ານ.ບາງເທື່ອ, ເງື່ອນໄຂຮັບເອົາສໍາລັບການບໍລິການອັນເຈາະຈົງໄດ້ຖືກອີງໃສ່ຣາຍໄດ້ອີກດ້ວຍ.

ການມີໄວ້ໃຫ້ຂອງການບໍລິການອາດຈະຖືກຈໍາກັດໂດຍຂອບເຂດຂອງເງິນທຶນ ຫລື ການຈົດຊື່ເຂົ້ານໍາ. ການເຂົ້າຮ່ວມນໍາຢູ່ໃນການບໍລິການທຸກໆຢ່າງຂອງ DDA ແມ່ນຕາມສະມັກໃຈ.

*ມັນເປັນນະໂຍບາຍຂອງກົມ DSHS ວ່າບຸກຄົນຈະບໍ່ຖືກແບ່ງແຍກຊົນຊັ້ນວັນນະໃສ່ (ຢູ່ໃນວຽກງານ ຫລື ການບໍລິການ) ຍ້ອນວ່າຜິວພັນ, ສີສັນ,ຄວາມເຊື່ອຖື, ສາສະນາ, ເຊື້ອຊາດດັ້ງເດີມ, ຄວາມອຸ່ນອ່ຽງທາງເພດ,ອາຍຸ, ເພດ, ການປາກົດມີຄວາມເສັຽອົງຄະດ້ານຄວາມຮູ້ສຶກ, ຈິດໃຈ ຫລືຮ່າງກາຍ, ການໃຊ້ຫມານໍາທາງ ຫລື ສັດລ້ຽງບໍລິການທີ່ຖືກຝຶກຝົນມາໂດຍບຸກຄົນຜູ້ທີ່ມີຄວາມເສັຽອົງຄະ, ຫລື ສະພາບນັກຣົບເກົ່າ.*

## ຂ້າພະເຈົ້າຈະສະມັກຂໍເອົາ DDA ຫລື ຮ້ອງຂໍເອົາການບໍລິການໄດ້ຢ່າງໃດຖ້າຫາກວ່າຂ້າພະເຈົ້າມີເງື່ອນໄຂໄດ້ຮັບແລ້ວ?

**ເຂົ້າອອນລາຍນ໌, ໂທຫາພວກເຮົາທາງໂທຣະສັບ, ຫລື ເຂົ້າມາຫາພວກເຮົາ**

ເຂົ້າອອນລາຍນ໌ໄດ້ທີ່:
*dshs.wa.gov/dda/service-and-information-request*

ເພື່ອຈະຊອກຫາບ່ອນຢູ່ຂອງພວກເຮົາໃຫ້ໄປທີ່:
*dshs.wa.gov/DDA/dda/ find-an-office*

ໂທຫາພວກເຮົາໄດ້ຕາມເລກໂທເລກນຶ່ງຢູ່ຂ້າງລຸ່ມນີ້:

| ຄາວຕີ | ໂທຣະສັບ |
|---|---|
| Chelan, Douglas, Ferry, Grant, Lincoln, Okanogan, Pend Oreille, Spokane, Stevens | (800) 319-7116 |
| Adams, Asotin, Benton, Columbia, Franklin, Garfield, Grant, Kittitas, Klickitat, Walla Walla, Whitman, Yakima | (866) 715-3646 |
| Island, San Juan, Skagit, Snohomish, Whatcom | (800) 567-5582 |
| King | (800) 974-4428 |
| Kitsap, Pierce | (800) 735-6740 |
| Clallam, Clark, Cowlitz, Grays Harbor, Jefferson, Lewis, Mason, Pacific, Skamania, Thurston, Wahkiakum | (888) 707-1202 |

# ແຜນທີ່ຫົນທາງນຳພາໄປສູ່ການບໍລິການ ແລະ ການອູ້ມຊູ *ສຳລັບເດັກນ້ອຍ ແລະ ຄອບຄົວ*

**ອາຍຸ 0 ຫາ 3 ປີ**

ການບໍລິການເຂົ້າແຊກແຊງນຳແຕ່ເລີ້ມຕົ້ນ ເອົາການອູ້ມຊູໃຫ້ສຳລັບການພັດທະນາທາງດ້ານຮ່າງກາຍ, ຄວາມຮັບຮູ້, ຄວາມຮູ້ສຶກທາງສັງຄົມ, ການຕິດຕໍ່ສື່ສານ ແລະ ການປັບຕົວເຂົ້າ. ໂທຫາສາຍດ່ວນສຳລັບສຸຂະພາບຂອງຄອບຄົວໄດ້ທີ່ເລກ 800-322-2588.

**ອາຍຸ 3 ປີ**

ເດັກນ້ອຍເລີ້ມຕົ້ນການຜັນປ່ຽນໄປສູ່ລະບົບໂຮງຮຽນທ້ອງຖິ່ນ. ໝວດໂຮງຮຽນຈະພິຈາລະນາເບິ່ງວ່າລູກຂອງທ່ານມີສິດໄດ້ຮັບການບໍລິການດ້ານການສຶກສາພິເສດກ່ອນອະນຸບານ ຫລື ບໍ່. ການສຶກສາພິເສດ ແລະ ການບໍລິການທີ່ກ່ຽວພັນນຳຈະຖືກເຮັດອອກມາໂດຍຜ່ານໂຄງການສຶກສາສ່ວນບຸກຄົນ (IEP) ກ່ອນວັນເກີດປີທີສາມຂອງລູກຂອງທ່ານ.

**ອາຍຸ 4 ປີ ແລະ 10 ປີ**

ສະໝັກຂໍເອົາເງື່ອນໄຂຮັບເອົາໃໝ່ອີກຖ້າຫາກວ່າ DDA ແຈ້ງບອກທ່ານວ່າເງື່ອນໄຂຮັບເອົາຂອງລູກຂອງທ່ານໄດ້ກາຍກຳນົດແລ້ວ.

**ອາຍຸ 14 ປີ ຫາ 21 ປີ**

ໂຮງຮຽນຂອງທ່ານສາມາດຊ່ວຍເຫລືອທ່ານນຳການບໍລິການຜັນປ່ຽນຕໍ່ມາກ່ອນວຽກງານ. ກໍ່ສ້າງການອູ້ມຊູຊ່ວຍເຫລືອຕົນເອງ, ຄວາມຊຳນານໃນການດຳລົງຊີວິດທາງສັງຄົມ ແລະ ບໍ່ຂຶ້ນນຳໃຜ. ຄົ້ນຄົ້ວາຊອກຫາວຽກງານ ແລະ ການສຶກສາຫລັງຈາກຂັ້ນອຸດົມສຶກສາ. ມີປະສົບປະການຂອງການຮຽນຮູ້ອີງຕາມວຽກງານ.

**ອາຍຸ 18 ປີ**

ຮ້ອງຂໍເອົາເງິນຄວາມປອດພັຍຂອງສັງຄົມ (SSI).

**ອາຍຸ 20 ປີ**

ເງື່ອນໄຂຮັບເອົາໄດ້ຖືກກວດເບິ່ງຄືນ. ຕອບຄຳຮ້ອງຂໍເອົາຣາຍລະອຽດຄືນ.

**ອາຍຸ 19 ປີ ແລະ ກາຍນັ້ນ**

ຕິດຕໍ່ຫາ Division of Vocational Rehabilitation ເພື່ອຄວາມອູ້ມຊູນຳການສຶກສາຫລັງຈາກຊັ້ນອຸດົມສຶກສາ, ການຝຶກຝົນວິຊາຊີບ, ການພັດທະນາວິຊາຊີບ ແລະ/ຫລື ຄວາມຊ່ວຍເຫລືອນຳການຊອກວຽກ. DDA ເອົາການອູ້ມຊູທາງດ້ານວຽກງານໃຫ້ທ່ານໃນວຽກງານຣະຍະຍາວ.

## ເດັກນ້ອຍ ແລະ ຜູ້ໃຫຍ່ອາດຈະມີເງື່ອນໄຂໄດ້ຮັບໂຄງການ ແລະ ການບໍລິການຂອງກົມ **DSHS**. ຕິດຕໍ່ຫາ **DDA** ເພື່ອຈະຮູ້ຈັກເພີ້ມເຕີມ.

### ໂຄງການ Community First Choice

- ການເບິ່ງແຍງດູແລສ່ວນຕົວ ແລະ ການເບິ່ງແຍງດູແລຜ່ອນຄາຍ
- ການຝຶກຝົນການຄົ້ນຄົ້ວາຊອກຫາຄວາມຊຳນານ
- ເທັກໂນໂລຈີຊ່ວຍເຫລືອ
- ການຕອບສະນອງຕໍ່ເຫດການສຸກເສີນສ່ວນຕົວ
- ການຝຶກຝົນເຣື່ອງການຄວບຄຸມເບິ່ງນຳຜູ້ເບິ່ງແຍງດູແລ

### ການສະລະສິດຢູ່ຕາມເຮືອນ ແລະ ຊຸມນຸມຊົນ

- ການບໍລິການຜັນປ່ຽນຢູ່ຕາມຊຸມນຸມຊົນ
- ການແຕ່ງຕັ້ງນາຍພະຍາບານ
- ການເບິ່ງແຍງດູແລບັນເທົາທຸກ
- ການດັດແປງນຳໂຄງຮ່າງ ແລະ ຍານພາຫານະ
- ອຸປະກອນ ແລະ ເຄື່ອງໃຊ້ສອຍ
- ເຄື່ອງນຸ່ງພິເສດ
- ການອູ້ມຊູດ້ານການປຶກສາ ແລະ ການປະພຶດ
- ການພະຍາບານ
- ການເຮັດວຽກນຳຊຸມນຸມຊົນ
- ການບໍລິການຕາມບ່ອນຢູ່ອາສັຍ
- ການບໍລິການບຳບັດ, ເຊັ່ນວ່າການຝຶກແອບບຳບັດດ້ານວຽກງານ, ຮ່າງກາຍ ຫລື ການຕິດຕໍ່ສື່ສານ
- ການຫລີກເວັ້ນພາວະສຸກເສີນ, ການເຂົ້າແຊກແຊງນຳ ແລະ ການເຮັດໃຫ້ຫຸ່ມທ່ຽງ
- ການປິ່ນປົວໂຣກຈິດ
- ການວາງແຜນມຸ່ງໃສ່ບຸກຄົນ
- ການລ້ຽງດູລູກຄ້າທີ່ຖືກອູ້ມຊູ
- ການໃຫ້ຄຳປຶກສາໝູ່ຄູ່
- ການອູ້ມຊູດ້ານວຽກງານ
- ການເຂົ້າຫາຊຸມນຸມຊົນ